ບົດລາຍງານ
ຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງ
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ປະຈຳປີ 2025



ໂດຍ:
ຕະຫຼາດຫຼັກຊັບລາວ

ສາລະບານ

1. ຂໍ້ມູນກ່ຽວກັບບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ 11
1.1. ຂໍ້ມູນທົ່ວໄປ 11
1.2. ຂໍ້ມູນທາງການເງິນ 11
1.3. ຂໍ້ມູນສະພາບໍລິຫານ 11
1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ 11
1.5. ຂໍ້ມູນຄະນະອຳນວຍການ 12
1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG 12
2.ພາບລວມຄະແນນຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ 13
2.1. ຜົນການປະເມີນຄະແນນຕົວຈິງ 13
2.2. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ 13
3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ 14
3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ 14
3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ 15
3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ 16
3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ 18
4. ສິ່ງທີ່ຕ້ອງໄດ້ປັບປຸງ 19
4.1. ສິ່ງທີ່ຄວນກຳນົດໃນກົດລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ: 19
4.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ 19

1. ຂໍ້ມູນກ່ຽວກັບບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ

1.1. ຂໍ້ມູນທົ່ວໄປ

ຫົວຂໍ້	ລາຍລະອຽດ
ຊື່ບໍລິສັດ:	ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ)
ທີ່ຕັ້ງສຳນັກງານ:	ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ
ເບີໂທລະສັບ:	021 316142
ປະເພດທຸລະກິດ:	ພະລັງງານໄຟຟ້າ
ວັນ.ເດືອນ.ປີ ຈົດທະບຽນໃນ ຕລຊລ:	11 ມັງກອນ 2011
ເວັບໄຊ:	www.edlgen.com.la
ຈຳນວນພະນັກງານ:	798 ຄົນ
ຈຳນວນຮຸ້ນຈົດທະບຽນ:	1,679,303,697 ຮຸ້ນ
ລາຄາຕະຫຼາດ (26/12/2024):	2,180 ກີບ/ຮຸ້ນ
ມູນຄ່າຕະຫຼາດ (26/12/2024):	3,660,882,059,460 ກີບ

1.2. ຂໍ້ມູນທາງການເງິນ

ຕົວເລກຂໍ້ມູນທາງການເງິນ (31 ທັນວາ 2024)	
ຊັບສິນ: 29,549,445 ລ້ານກີບ	ລາຍຮັບ: 3,003,279 ລ້ານກີບ
ໜີ້ສິນ: 20,831,914 ລ້ານກີບ	ລາຍຈ່າຍ: 4,713,796 ລ້ານກີບ
ທຶນ: 8,717,531 ລ້ານກີບ	ຂາດທຶນສຸດທິ: 1,710,517 ລ້ານກີບ

1.3. ຂໍ້ມູນສະພາບໍລິຫານ

ສະພາບໍລິຫານຂອງ ບໍລິສັດ ຜ-ຟຟລ ປະກອບມີສະມາຊິກສະພາບໍລິຫານ ທັງໝົດ 7 ທ່ານ ຊຶ່ງມີລາຍຊື່ ດັ່ງນີ້:

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ສຸລິວັດ ສຸວັນນະຈຸມຄຳ	ປະທານສະພາບໍລິຫານ
2	ທ່ານ ປອ.ອາຄົມເດດ ວົງໄຊ	ຮອງປະທານສະພາບໍລິຫານ
3	ທ່ານ ວິເລດ ກົມນາວົງ	ສະມາຊິກ
4	ທ່ານ ສຸກສະຫວາດ ໂສສຸພັນ	ສະມາຊິກ
5	ທ່ານ ຊົນລະວິດ ວິນິໄສ	ສະມາຊິກ
6	ທ່ານ ສຈ.ປອ ພູເພັດ ກ້ຽວພິລາວົງ	ສະມາຊິກອິດສະຫຼະ
7	ທ່ານ ພັນປານີ ສິດທິລາດ	ສະມາຊິກອິດສະຫຼະ

1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ບໍລິສັດ ຜ-ຟຟລ ປະກອບດ້ວຍ 4 ຄະນະກຳມະການ ເຊິ່ງແຕ່ລະຄະນະກຳມະການປະກອບດ້ວຍສະມາຊິກ ດັ່ງນີ້:

1) ຄະນະກຳມະການກວດສອບ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ພັນປານີ ສິດທິລາດ	ປະທານ (ສະມາຊິກອິດສະຫຼະ)
2	ທ່ານ ສຈ.ປອ ພູເພັດ ກ້ຽວພິລາວົງ	ຮອງປະທານ (ສະມາຊິກອິດສະຫຼະ)
3	ທ່ານ ວິເລດ ກົມນາວົງ	ສະມາຊິກ

2) ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ວິເລດ ກົມນາວົງ	ປະທານ
2	ທ່ານ ພັນປານີ ສິດທິລາດ	ຮອງປະທານ (ສະມາຊິກອິດສະຫຼະ)
3	ທ່ານ ສຈ.ປອ ພູເພັດ ກ້ຽວພິລາວົງ	ສະມາຊິກອິດສະຫຼະ

3) ຄະນະກຳມະການການຄັດເລືອກ ແລະ ກຳນົດຄ່າຕອບແທນ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ສຈ.ປອ ພູເພັດ ກ້ຽວພິລາວົງ	ປະທານ (ສະມາຊິກອິດສະຫຼະ)
2	ທ່ານ ສຸລິວັດ ສຸວັນນະຈຸມຄຳ	ຮອງປະທານ
3	ທ່ານ ຊົນລະວິດ ວິນິດໄສ	ສະມາຊິກ

4) ຄະນະກຳມະການຄຸ້ມຄອງບໍລິຫານ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ສຸກສະຫວາດ ໂສສຸພັນ	ປະທານ
2	ທ່ານ ຊົນລະວິດ ວິນິດໄສ	ຮອງປະທານ
3	ທ່ານ ປອ.ອາຄົມເດດ ວົງໄຊ	ສະມາຊິກ

1.5. ຂໍ້ມູນຄະນະຜູ້ອຳນວຍການ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ສຸກສະຫວາດ ໂສສຸພັນ	ຜູ້ອຳນວຍການໃຫຍ່
2	ທ່ານ ດາວວຽງ ສຸນັນທະລາດ	ຮອງຜູ້ອຳນວຍການໃຫຍ່
3	ທ່ານ ຄຳໃບ ຫຼວງໄຊ	ຮອງຜູ້ອຳນວຍການໃຫຍ່
4	ທ່ານ ນາງ ໂພຄົນ ອັບໄພ	ຮອງຜູ້ອຳນວຍການໃຫຍ່
5	ທ່ານ ສີລິພົມ ແສງອ່ອນແກ້ວ	ຮອງຜູ້ອຳນວຍການໃຫຍ່

1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG

ລ.ດ	ຊື່ ແລະ ນາມສະກຸນ	ເບີໂທ	ອີເມລ
1	ທ່ານ ລິດທິສັກ ວິລະວົງ	020 2229 1999	viravongfamily@gmail.com
2	ທ່ານ ນາງ ມາລາໂສ ບຸນມີ	020 2837 2127	Malaso_b@hotmail.com
3	ທ່ານ ນາງ ດາລາວັນ ຈັນທະວົງ	020 5879 6326	Dalavanhctv@gmail.com

2. ພາບລວມຄະແນນຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ

2.1. ຜົນການປະເມີນຄະແນນຕົວຈິງ

ຜົນປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຕົວຈິງ ຂອງ ບໍລິສັດ ຜ-ຟຟລ ປະຈຳປີ 2025 ແມ່ນເຫັນວ່າ: ບໍລິສັດ ຜ-ຟຟລ ໄດ້ຄະແນນທັງໝົດ 79.26 ຄະແນນ ຈັດເປັນ ປະເພດ 4 ດາວ ຊຶ່ງມີລາຍລະອຽດເພີ່ມເຕີມດັ່ງນີ້:


ພາກ	ຄະແນນທັງໝົດ	ຄະແນນຕົວຈິງ
ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ	10	9.00
ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ	10	8.64
ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ	40	32.43
ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ	40	29.19
ລວມ	**100**	**79.26**

2.2. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ

ການໃຫ້ຄະແນນ ປະກອບມີ 3 ປະເພດຄື: FA (Fully Applied) - ປະຕິບັດໄດ້ທັງໝົດ = 1 ຄະແນນ, PA (Partial Applied) - ປະຕິບັດໄດ້ບາງສ່ວນ = 0.5 ຄະແນນ ແລະ NA (Not Applied) - ບໍ່ສາມາດປະຕິບັດໄດ້ = 0 ຄະແນນ, ບໍລິສັດ ຜ-ຟຟລ ສາມາດປະຕິບັດໄດ້ດັ່ງນີ້:

ຜ-ຟຟລ	ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ		ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ		ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ		ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ		ລວມ	
	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%
ປະຕິບັດໄດ້ທັງໝົດ	12	80%	8	73%	28	76%	23	62%	71	71%
ປະຕິບັດໄດ້ບາງສ່ວນ	3	20%	3	27%	4	11%	8	22%	18	18%
ບໍ່ສາມາດປະຕິບັດໄດ້	0	0%	0	0%	5	14%	6	16%	11	11%
ລວມ	**15**	**100%**	**11**	**100%**	**37**	**100%**	**37**	**100%**	**100**	**100%**

ຈາກຂໍ້ມູນຂ້າງເທິງນີ້ ແມ່ນເຫັນໄດ້ວ່າ ບໍລິສັດ ຜ-ຟຟລ ສາມາດຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານໄດ້ທັງໝົດ (FA) ເທົ່າກັບ 71%, ຮອງລົງມາແມ່ນສາມາດປະຕິບັດໄດ້ບາງສ່ວນ (PA) 18% ແລະ ບໍ່ສາມາດປະຕິບັດໄດ້ (NA) 11% ຂອງ ຄຳຖາມທັງໝົດ. ຜົນການປະເມີນຂ້າງເທິງນີ້ ສາມາດສະທ້ອນຜ່ານເສັ້ນສະແດງ ດັ່ງນີ້:



3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ

3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ

ບໍລິສັດ ຜ-ຟຟລ ສາມາດປະຕິບັດໄດ້ທັງໝົດ (FA) 80%, ຮອງລົງມາປະຕິບັດໄດ້ບາງສ່ວນ (PA) 20% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 0% ຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ການຈັດກອງປະຊຸມຜູ້ຖືຮຸ້ນ: ບໍລິສັດ ຜ-ຟຟລ ແຈ້ງຂັ້ນ ຕອນ ວິທີການລົງຄະແນນສຽງ ແລະ ຜົນຂອງການລົງ ຄະແນນໃນແຕ່ລະວາລະ ລວມເຖິງການໃຫ້ສິດແກ່ຜູ້ຖື ຮຸ້ນໃນການລົງຄະແນນສຽງ 1 ຮຸ້ນຕໍ່ 1 ສຽງໃນກອງ ປະຊຸມຜູ້ຖືຮຸ້ນ. - ບໍລິສັດ ໄດ້ຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ ຕາມລາຍຊື່ ໃນປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ພາຍໃນ 30 ວັນ ນັບ ແຕ່ມື້ມີມະຕິຈ່າຍເງິນປັນຜົນ. - ບໍລິສັດ ຜ-ຟຟລ ໄດ້ມີການແຕ່ງຕັ້ງ ຫຼື ຍົກເລີກສັນຍາ ບໍລິສັດກວດສອບ ແລະ ຄ່າບໍລິການກວດສອບໄດ້ຮັບ ອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ. - ຜູ້ຖືຮຸ້ນໄດ້ຮັບຂໍ້ມູນກ່ຽວກັບປະສົບການ ແລະ ປະຫວັດ ຫຍໍ້ຂອງເປົ້າໝາຍຜູ້ສະໝັກທີ່ຖືກສະເໜີລາຍຊື່ ເພື່ອ ປະກອບເປັນສະມາຊິກສະພາບໍລິຫານ ລວມທັງຂໍ້ມູນ ກ່ຽວກັບອາຍຸ, ວຸດທິການສຶກສາ, ປະສົບການ ແລະ ການດຳລົງຕຳແໜ່ງຂອງພວກເຂົາໃນບໍລິສັດຈົດ ທະບຽນ ກ່ອນກອງປະຊຸມຜູ້ຖືຮຸ້ນ.	- ບໍລິສັດ ຜ-ຟຟລ ຍັງບໍ່ໄດ້ກຳນົດກ່ຽວກັບນະໂຍບາຍປັນ ຜົນ ໂດຍສະເພາະຕິດພັນກັບວິທີການຈ່າຍເງິນປັນຜົນ ພາຍໃນ 30 ວັນ ພາຍຫຼັງມີມະຕິກອງປະຊຸມຜູ້ຖືຮຸ້ນໃນ ກົດລະບຽບພາຍໃນຂອງບໍລິສັດ. - ບໍລິສັດ ຜ-ຟຟລ ຍັງບໍ່ກຳນົດເຫດການກ່ຽວກັບການອອກ ຈຳໜ່າຍຮຸ້ນໃໝ່ ລວມເຖິງສິດຂອງຜູ້ຖືຮຸ້ນ ຈະໄດ້ຮັບສິດ ໃນການຈອງຊື້ຮຸ້ນອອກໃໝ່ ໃນອັດຕາສ່ວນ ແລະ ວິທີ ແບ່ງປັນຮຸ້ນ ຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ ກ່ອນສະ ເໜີຂາຍໃຫ້ແກ່ພາກສ່ວນພາຍນອກ, ທຸລະກຳ ຊື້ ຂາຍ ຫຼື ໂອນ ຊັບສິນ ທີ່ມີມູນຄ່າ 50% ຂຶ້ນໄປ ຂອງຊັບສິນທັງ ໝົດ ຫຼື ເຫດການອື່ນໆ ທີ່ສຳຄັນ ຊຶ່ງຕ້ອງຜ່ານການ ຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍ ໃນ ຫຼື ລະບຽບການສະເພາະຂອງບໍລິສັດ. - ບໍລິສັດ ຜ-ຟຟລ ບໍ່ສາມາດນຳສົ່ງໜັງສືແຈ້ງເຊີນໃຫ້ແກ່ຜູ້ ຖືຮຸ້ນ ເພື່ອເຂົ້າຮ່ວມກອງປະຊຸມ ວິສາມັນຜູ້ຖືຮຸ້ນ ຢ່າງ ໜ້ອຍ 21 ວັນ ກ່ອນມື້ເປີດກອງປະຊຸມຜູ້ຖືຮຸ້ນ.

- ຜູ້ອຳນວຍການໃຫຍ່ ແລະ ຜູ້ກວດສອບພາຍນອກ ໄດ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ເປັນປະຈຳເພື່ອຕອບຄຳຖາມ ແລະ ຊີ້ແຈງປະເດັນທີ່ກ່ຽວຂ້ອງ. - ບໍລິສັດ ຜ-ຟຟລ ໄດ້ກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນທີ່ຖືຮຸ້ນ ຫຼື ຖືລວມກັນ 5% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນໜ້ອຍກວ່າ 5% ຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ ໄວ້ໃນລະບຽບການພາຍໃນຂອງບໍລິສັດ. - ບໍລິສັດ ຜ-ຟຟລ ໄດ້ກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນທີ່ຖືຮຸ້ນ ຫຼື ຖືລວມກັນ 10% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດສະເໜີສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນ ໄວ້ໃນລະບຽບການພາຍໃນຂອງບໍລິສັດ.	

3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ

ບໍລິສັດ ຜ-ຟຟລ ສາມາດປະຕິບັດໄດ້ທັງໝົດ (FA) 73%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 27% ແລະ ບໍ່ສາມາດປະຕິບັດໄດ້ (NA) ຄິດເປັນ 0% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດໄດ້	ຂໍ້ຄົງຄ້າງ
- ສະພາບໍລິຫານ ໄດ້ກຳນົດນະໂຍບາຍດ້ານຄວາມປອດໄພ, ສະຫວັດດີການສັງຄົມ,ການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນ ເພື່ອໃຫ້ພະນັກງານຂອງບໍລິສັດ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດວຽກງານໃຫ້ບັນລຸຜົນສຳເລັດຕາມເປົ້າໝາຍຂອງບລິສັດ ແລະ ມີສ່ວນຮ່ວມໃນວຽກງານຄຸ້ມຄອງບໍລິຫານບໍລິສັດ. - ບໍລິສັດ ຜ-ຟຟລ ໄດ້ລະບຸຊ່ອງທາງການຕິດຕໍ່ພົວພັນ ເພື່ອຮັບຄຳເຫັນ ຫຼື ຮ້ອງຮຽນ ຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ກ່ຽວກັບບັນຫາ, ຂໍ້ສົງໄສ ຫຼື ການລະເມີດສິດ/ສັນຍາຂອງພວກເຂົາ ໄວ້ໃນເວັບໄຊ ຫຼື ປົກສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີຂອງ ບໍລິສັດ. - ບໍລິສັດ ຜ-ຟຟລ ໄດ້ສ້າງກົນໄກ ສຳລັບການສະໜອງຂໍ້ມູນ, ຄຳເຫັນ ຫຼື ຮ້ອງຮຽນ ຂອງພະນັກງານ ຕໍ່ກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ, ລະບຽບການ ຫຼື ກົດ	- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍກ່ຽວກັບການພົວພັນຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນການຢູ່. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້ ເປັນຕົ້ນແມ່ນ ການກຳນົດເງື່ອນໄຂການຄ້ຳປະກັນ ແລະ ການຜິດນັດຊຳລະໜີ້.

ໝາຍ ຂອງສະມາຊິກສະພາບໍລິຫານ ຫຼື ຜູ້ບໍລິຫານລະດັບສູງຂອງບໍລິສັດ. - ສະພາບໍລິຫານ ໄດ້ກຳນົດນະໂຍບາຍການຕ້ານການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ ຢ່າງເຂັ້ມງວດ ໄວ້ໃນກົດລະບຽບກ່ຽວກັບຈັນຍາບັນຂອງບໍລິສັດ. - ສະພາບໍລິຫານ ໄດ້ກຳນົດນະໂຍບາຍກ່ຽວກັບການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ. - ສະພາບໍລິຫານ ໄດ້ ກຳນົດນະໂຍບາຍສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາແບບຍືນຍົງ.	

3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ

ບໍລິສັດ ຜ-ຟຟລ ສາມາດປະຕິບັດໄດ້ທັງໝົດ (FA) 76%, ຮອງລົງມາປະຕິບັດໄດ້ບາງສ່ວນ (PA) 11% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 14% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດໄດ້	ຂໍ້ຄົງຄ້າງ
- ບໍລິສັດ ຜ-ຟຟລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ລັກສະນະ, ມູນຄ່າ ແລະ ລາຍຊື່ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນ ພ້ອມທັງ ສາຍພົວພັນຂອງຜູ້ກ່ຽວຕໍ່ລາຍການທີ່ກ່ຽວພັນ ໃນເອກະສານລາຍງານການເງິນຂອງບໍລິສັດ. - ບໍລິສັດ ຜ-ຟຟລ ໄດ້ເປີດເຜີຍກ່ຽວກັບ ວິໄສທັດ, ຈຸດປະສົງ, ເປົ້າໝາຍ ຫຼື ແຜນຍຸດທະສາດໃນການເຄື່ອນໄຫວວຽກງານ ຂອງບໍລິສັດ. - ບໍລິສັດ ຜ-ຟຟລ ໄດ້ເປີດເຜີຍຂໍ້ມູນລະອຽດກ່ຽວກັບກຸ່ມບໍລິສັດ ຫຼື ບໍລິສັດໃນກຸ່ມຂອງຕົນ, ຂໍ້ມູນກ່ຽວກັບປັດໄຈຄວາມສ່ຽງ, ຂໍ້ມູນທາງການເງິນ, ຂໍ້ມູນທີ່ບໍ່ແມ່ນການເງິນ, ເຫດການສຳຄັນ, ປະຫວັດການສຶກສາ ແລະ ການຝຶກອົບຮົມຂອງສະມາຊິກສະພາບໍລິຫານ, ຈຳນວນຄັ້ງໃນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. - ບໍລິສັດ ຜ-ຟຟລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ລາຍຊື່ຜູ້ຖືຮຸ້ນ ທາງກົງ ແລະ ທາງອ້ອມ ທີ່ຖືຮຸ້ນແຕ່ 5% ຂຶ້ນໄປ. - ບໍລິສັດ ຜ-ຟຟລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບການຖືຮຸ້ນທາງກົງ ແລະ ທາງອ້ອມຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ.	- ບໍລິສັດ ຜ-ຟຟລ ບໍ່ ໄດ້ເປີດເຜີຍຂໍ້ ມູນກ່ຽວກັບ ນະໂຍບາຍກ່ຽວກັບລາຍການທີ່ກ່ຽວພັນ ເປັນຕົ້ນຂັ້ນຕອນການພິຈາລະນາ ແລະ ການອະນຸມັດ ລາຍການທີ່ກ່ຽວພັນ (RPTs) ແລະ ນະໂຍບາຍປັນຜົນໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. - ບໍລິສັດ ຜ-ຟຟລ ບໍ່ ໄດ້ ລາຍງານ ຫຼື ເປີດເຜີຍຂໍ້ມູນການຊື້-ຂາຍຮຸ້ນບໍລິສັດ ຂອງສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ, ຫົວໜ້າກວດກາພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນ 72 ຊົ່ວໂມງ. - ບໍລິສັດ ບໍ່ ໄດ້ເປີດເຜີຍຂໍ້ມູນກ່ຽວກັບມາດຖານທີ່ນຳໃຊ້ໃນການຄັດເລືອກ, ຂັ້ນຕອນການຄັດເລືອກ ແລະ ແຕ່ງຕັ້ງສະພາບໍລິຫານຊຸດໃໝ່. - ບໍລິສັດ ຜ-ຟຟລ ບໍ່ ໄດ້ເປີດເຜີຍລະບຽບພາຍໃນກ່ຽວກັບການກຳນົດຄ່າຕອບແທນຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານ ໃຫ້ມວນຊົນຊາບ ຜ່ານທາງເວັບໄຊຂອງບໍລິສັດ. - ບໍລິສັດ ຜ-ຟຟລ ບໍ່ ໄດ້ເປີດເຜີຍນະໂຍບາຍກ່ຽວກັບຄ່າຕອບແທນ ແລະ ມູນຄ່າລວມທັງໝົດ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການໃນແຕ່ລະປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ.

- ບໍລິສັດ ຜ-ຟຟລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບການປ່ຽນແປງ ຫຼື ເຫດການທີ່ສຳຄັນທີ່ເກີດຂຶ້ນພາຍໃນປີໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. - ບໍລິສັດ ຜ-ຟຟລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ເອກະສານລາຍງານການເງິນປະຈຳປີ, ບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ, ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ໃນເວັບໄຊ້ຂອງບໍລິສັດ ຢ່າງປົກກະຕິ. - ບໍລິສັດ ຜ-ຟຟລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບພະນັກງານຮັບຜິດຊອບຕິດຕໍ່ພົວພັນກັບນັກລົງທຶນ (ນັກລົງທຶນສຳພັນ) ໃນເວັບໄຊຂອງບໍລິສັດ. - ບໍລິສັດ ຜ-ຟຟລ ໄດ້ເປີດເຜີຍບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຈາກຜູ້ກວດສອບພາຍນອກ ພາຍໃນ 120 ວັນ ນັບແຕ່ວັນສິ້ນສຸດປີການບັນຊີ. - ບໍລິສັດ ຜ-ຟຟລ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳໄຕມາດ 1 ແລະ ໄຕມາດ 3 ພາຍໃນ 45 ວັນ ນັບແຕ່ວັນສິ້ນສຸດໄຕມາດ 1 ແລະ ໄຕມາດ 3 ເປັນຕົ້ນໄປ. - ບໍລິສັດ ຜ-ຟຟລ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ ທີ່ຜ່ານການທົບທວນຈາກຜູ້ກວດສອບພາຍນອກ ພາຍໃນ 60 ວັນ ນັບແຕ່ວັນສິ້ນສຸດໄຕມາດ 2 ເປັນຕົ້ນໄປ. - ບໍລິສັດ ຜ-ຟຟລ ໄດ້ເປີດເຜີຍມະຕິກອງປະຊຸມຜູ້ຖືຮຸ້ນພາຍໃນກຳນົດເວລາ 24 ຊົ່ວໂມງ ນັບແຕ່ວັນສຳເລັດກອງປະຊຸມຜູ້ຖືຮຸ້ນເປັນຕົ້ນໄປ. - ບໍລິສັດ ຜ-ຟຟລ ໄດ້ມີການສັບປ່ຽນ ບໍລິສັດກວດສອບທຸກໆ 5 ປີ. - ບໍລິສັດ ຜ-ຟຟລ ໄດ້ເປີດເຜີຍຄ່າບໍລິການຂອງບໍລິສັດກວດສອບທີ່ໄດ້ຮັບຈາກການກວດສອບເອກະສານລາຍງານການເງິນຂອງແຕ່ລະປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ.	- ບໍລິສັດ ຜ-ຟຟລ ບໍ່ໄດ້ເປີດເຜີຍຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ໃນແຕ່ລະປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ.

- ບໍລິສັດ ຜ-ຟຟລ ໄດ້ມີການແຕ່ງຕັ້ງຜູ້ຮັບຜິດຊອບໃນການລາຍງານ ແລະ ຜູ້ຮັບຜິດຊອບວຽກງານເປີດເຜີຍຂໍ້ມູນ ແລະ ໄດ້ຜ່ານການຝຶກອົບຮົມວຽກງານດັ່ງກ່າວ.	

3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ

ບໍລິສັດ ຜ-ຟຟລ ສາມາດປະຕິບັດໄດ້ທັງໝົດ (FA) 62%, ຮອງລົງມາປະຕິບັດໄດ້ບາງສ່ວນ (PA) 22% ແລະ ບໍ່ສາມາດປະຕິບັດໄດ້ (NA) 16% ຂອງຄຳຖາມທັງໝົດ ຊຶ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດໄດ້	ຂໍ້ຄົງຄ້າງ
- ບໍລິສັດ ຜ-ຟຟລ ມີສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ຢ່າງໜ້ອຍ 1 ທ່ານ ມີປະສົບການເຮັດວຽກໃນຂະແໜງການທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ. - ການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ສະມາຊິກສະພາບໍລິຫານ ໄດ້ຮັບການຕົກລົງເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ. - ສະພາບໍລິຫານ ມີສະມາຊິກຢ່າງໜ້ອຍ 5 ທ່ານ ແລະ ມີສະມາຊິກອິດສະຫຼະ ຢ່າງໜ້ອຍ 1/3 ຂອງຈຳນວນສະມາຊິກສະພາບໍລິຫານທັງໝົດ. - ສະມາຊິກອິດສະຫຼະ ມີອາຍຸການດຳລົງຕຳແໜ່ງລວມສູງສຸດບໍ່ເກີນ 8 ປີຕໍ່ເນື່ອງ. - ສະພາບໍລິຫານໄດ້ມີການຈັດກອງປະຊຸມຢ່າງໜ້ອຍ 4 ຄັ້ງຕໍ່ປີ ແລະ ສະມາຊິກແຕ່ລະທ່ານໄດ້ເຂົ້າຮ່ວມກອງປະຊຸມສະພາບໍລິຫານຢ່າງໜ້ອຍ 3/4 ຂອງກອງປະຊຸມທັງໝົດ. - ສະພາບໍລິຫານ ໄດ້ກຳນົດ ຈຸດປະສົງ, ວິໄສທັດ ແລະ ສື່ສານວັດທະນາທຳຂອງອົງກອນ ເພື່ອເຮັດໃຫ້ພະນັກງານທັງໝົດພາຍໃນບໍລິສັດ ເຂົ້າໃຈກ່ຽວກັບທິດທາງແຜນຍຸດທະສາດຂອງບໍລິສັດ. - ສະພາບໍລິຫານໄດ້ມີການແຕ່ງຕັ້ງ ຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການຄັດເລືອກ, ຄະນະກຳມະການກຳນົດຜົນຕອບແທນ ແລະ ຄະນະກຳມະການອື່ນ. - ຄະນະກຳມະການກວດສອບມີສະມາຊິກທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ແລະ ໃນນັ້ນ ½ ແມ່ນສະມາຊິກອິດສະຫຼະ. - ປະທານຄະນະກຳມະການກວດສອບເປັນສະມາຊິກອິດສະຫຼະ ແລະ ມີຄວາມຮູ້ ແລະ ປະສົບການທາງດ້ານບັນຊີ. - ສະພາບໍລິຫານໄດ້ຮັບຮອງແຜນການຈັດກອງປະຊຸມສະພາບໍລິຫານທີ່ ກວມເອົາວັນເວລາຈັດຕັ້ງກອງປະຊຸມສະພາບໍລິຫານ ແລະ ວາລະ ຈະປຶກສາຫາລື.	- ບໍລິສັດ ຜ-ຟຟລ ຍັງບໍ່ໄດ້ກຳນົດໂຄງປະກອບສະພາບໍລິຫານ ຕ້ອງປະກອບມີ ສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ຢ່າງໜ້ອຍ 1 ທ່ານ ແລະ ສະມາຊິກເພດຍິງ 1 ທ່ານ ລວມເຖິງເງື່ອນໄຂການເປັນສະມາຊິກສະພາບໍລິຫານດັ່ງກ່າວ ໄວ້ໃນນິຕິກຳພາຍໃນທີ່ກ່ຽວຂ້ອງຂອງບໍລິສັດ. - ສະພາບໍລິຫານ ບໍ່ມີສະມາຊິກສະພາບໍລິຫານເພດຍິງ. - ບໍລິສັດ ຜ-ຟຟລ ຍັງບໍ່ໄດ້ກຳນົດເງື່ອນໄຂການດຳລົງຕຳແໜ່ງຂອງສະມາຊິກອິດສະຫຼະ ຫຼັງຈາກຄົບອາຍຸການດຳລົງຕຳແໜ່ງດັ່ງກ່າວ ສະມາຊິກອິດສະຫຼະ ສາມາດສືບຕໍ່ເປັນຜູ້ທີ່ມີເງື່ອນໄຂໃນການຄັດເລືອກ ແລະ ດຳລົງຕຳແໜ່ງເປັນສະມາຊິກສະພາບໍລິຫານທີ່ບໍ່ແມ່ນສະມາຊິກອິດສະຫຼະໄດ້. - ປະທານສະພາບໍລິຫານບໍ່ແມ່ນສະມາຊິກອິດສະຫຼະ. ພ້ອມນັ້ນສະພາບໍລິຫານ ບໍ່ໄດ້ຄັດເລືອກ ແລະ ແຕ່ງຕັ້ງ ຫົວໜ້າສະມາຊິກອິດສະຫຼະ. - ສະມາຊິກສະພາບໍລິຫານແຕ່ລະຄົນ ບໍ່ໄດ້ຮັບເອກະສານທີ່ຕິດພັນກັບກອງປະຊຸມສະພາບໍລິຫານ ຫຼື ຄະນະກຳມະການຂອງສະພາບໍລິຫານ ຢ່າງໜ້ອຍ 7 ວັນລັດຖະການ ກ່ອນການປະຊຸມ. - ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ ບໍ່ແມ່ນສະມາຊິກອິດສະຫຼະ. - ບໍລິສັດ ຜ-ຟຟລ ບໍ່ໄດ້ສ້າງ ແລະ ຮັບຮອງລະບຽບພາຍໃນກ່ຽວກັບຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ ຂອງສະພາບໍລິຫານ ພ້ອມທັງເຜີຍແຜ່ລະບຽບດັ່ງກ່າວໃຫ້ມວນຊົນຮັບຊາບຜ່ານເວັບໄຊຂອງບໍລິສັດ. - ຄະນະກຳມະການກຳນົດຄ່າຕອບແທນ ບໍ່ໄດ້ປະຊຸມກັນຢ່າງໜ້ອຍ 2 ຄັ້ງຕໍ່ປີ. - ບໍລິສັດ ຜ-ຟຟລ ຍັງບໍ່ໄດ້ເປີດເຜີຍແຜນສືບທອດພະນັກງານສຳລັບຕຳແໜ່ງຂອງສະມາຊິກສະພາບໍລິຫານ

- ສະພາບໍລິຫານ ໄດ້ຈັດກອງປະຊຸມສະພາບໍລິຫານຢ່າງໜ້ອຍ 4 ຄັ້ງ ຕໍ່ປີ. - ຄະນະກຳມະການຕ່າງໆ ຂອງສະພາບໍລິຫານ ໄດ້ຈັດກອງປະຊຸມຂອງຕົນ ສອດຄ່ອງຕາມຫຼັກການການຄຸ້ມຄອງບໍລິຫານ. - ປະທານຄະນະກຳມະການຄັດເລືອກ ແລະ ປະທານຄະນະກຳມະການກຳນົດຄ່າຕອບແທນແມ່ນສະມາຊິກອິດສະຫຼະ. - ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ສ້າງ ແລະ ຄຸ້ມຄອງຂັ້ນຕອນນະໂຍບາຍໃນການກຳນົດ ແລະ ບໍລິຫານຄວາມສ່ຽງ.	, ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ. - ສະພາບໍລິຫານ ບໍ່ໄດ້ກຳນົດອົງປະຊຸມຂອງກອງປະຊຸມສະພາບໍລິຫານ ຢ່າງໜ້ອຍ 2/3 ຂອງຈຳນວນສະມາຊິກທັງໝົດ ໄວ້ໃນລະບຽບການສະເພາະຂອງບໍລິສັດ. - ສະພາບໍລິຫານ ບໍ່ໄດ້ປະເມີນຜົນການເຄື່ອນໄຫວວຽກງານຂອງ ສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ປະຈຳປີ. - ບໍລິສັດ ຜ-ຟຟລ ຍັງບໍ່ໄດ້ເປີດເຜີຍມາດຖານ, ຂັ້ນຕອນ, ເງື່ອນໄຂ ການປະເມີນຜົນການເຄື່ອນໄຫວວຽກງານຂອງ ປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ.

4. ສິ່ງທີ່ຕ້ອງໄດ້ປັບປຸງ

1.1. ສິ່ງທີ່ຄວນກຳນົດໃນກົດລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ:

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ, ບໍລິສັດ ຜ-ຟຟລ ຄວນແກ້ໄຂບັນຫາທີ່ຄົງຄ້າງ ດັ່ງນີ້:

- ຄວນກຳນົດນະໂຍບາຍປັນຜົນ ໂດຍສະເພາະວິທີການຈ່າຍເງິນປັນຜົນ ຈ່າຍພາຍໃນ 30 ວັນ ພາຍຫຼັງມີມະຕິກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ຄວນກຳນົດເຫດການຕ່າງໆ ທີ່ຕ້ອງຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ເປັນຕົ້ນ ການອອກຈຳໜ່າຍຮຸ້ນໃໝ່ ລວມເຖິງສິດຂອງຜູ້ຖືຮຸ້ນ ຈະໄດ້ຮັບສິດໃນການຈອງຊື້ຮຸ້ນອອກໃໝ່ ໃນອັດຕາສ່ວນ ແລະ ວິທີແບ່ງປັນຮຸ້ນ ຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ ກ່ອນສະເໜີຂາຍໃຫ້ແກ່ພາກສ່ວນພາຍນອກ, ການລົງທຶນ ຊື້ຂາຍ, ໂອນ ຊັບສິນທີ່ມູນຄ່າກວມເອົາ 50% ຂຶ້ນໄປ ຂອງຊັບສິນທັງໝົດຂອງບໍລິສັດ ແລະ ລາຍການທີ່ກ່ຽວພັນອື່ນໆ ໄວ້ໃນລະບຽບພາຍໃນຂອງບໍລິສັດ;
- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ;
- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍກ່ຽວກັບການພົວພັນຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນການຢູ່;
- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້ ເປັນຕົ້ນແມ່ນ ການກຳນົດເງື່ອນໄຂການຄ້ຳປະກັນ ແລະ ການຜິດນັດຊຳລະໜີ້;
- ສະພາບໍລິຫານ ຄວນກຳນົດເງື່ອນໄຂ, ມາດຕະຖານຂອງການເປັນສະມາຊິກສະພາບໍລິຫານ, ໂຄງປະກອບບຸກຄະກອນສະພາບໍລິຫານຕ້ອງປະກອບສະມາຊິກອິດສະຫຼະ, ສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ແລະ ສະມາຊິກສະພາບໍລິຫານເພດຍິງ, ສິດ,ໜ້າທີ່, ຄວາມຮັບຜິດຊອບ, ອາຍຸການດຳລົງຕຳແໜ່ງ ຫຼື ພົ້ນຕຳແໜ່ງການເປັນສະມາຊິກສະພາບໍລິຫານ, ຂັ້ນຕອນ ແລະ ແຜນວິທີການເຮັດວຽກ, ນະໂຍບາຍກຳນົດຄ່າ

ຕອບແທນຂອງສະມາຊິກສະພາບໍລິຫານ ແລະ ອື່ນໆ ຕາມຫຼັກການຄຸ້ມຄອງບໍລິຫານ ທີ່ກຳນົດໄວ້ໃນຄຳແນະນຳ ວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ.

- ຄະນະກຳມະການຄັດເລືອກ ແລະ ຄະນະກຳມະການກຳນົດຄ່າຕອບແທນຂອງ ບໍລິສັດ ຄວນສ້າງ ແລະ ຜັນຂະຫຍາຍລະບຽບການຂອງຕົນເປັນນິຕິກຳສະເພາະ ທີ່ກຳນົດກ່ຽວໂຄງປະກອບ ແລະ ເງື່ອນໄຂການເປັນຄະນະກຳມະການ, ສິດ ແລະ ໜ້າທີ່, ມາດຖານ, ກົນໄກ ແລະ ຂັ້ນຕອນໃນການຄັດເລືອກ ຫຼື ກຳນົດຄ່າຕອບແທນ ສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ ລວມເຖິງວິທີການເຮັດວຽກຂອງຄະນະກຳມະການດັ່ງກ່າວ ພ້ອມນັ້ນ, ສະເໜີໃຫ້ ສະພາບໍລິຫານພິຈາລະນາຮັບຮອງ ພ້ອມທັງເຜີຍແຜ່ລະບຽບການດັ່ງກ່າວຜ່ານເວັບໄຊ ຂອງ ບໍລິສັດ.

1.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ, ບໍລິສັດ ຜ-ຟຟລ ຕ້ອງເພີ່ມຄວາມເອົາໃຈໃສ່ບັນຫາ ດັ່ງນີ້:

- ຄວນເປີດເຜີຍນະໂຍບາຍລາຍການທີ່ກ່ຽວພັນ, ນະໂຍບາຍເງິນປັນຜົນ, ນະໂຍບາຍກ່ຽວກັບຄ່າຕອບແທນແຕ່ລະທ່ານ ແລະ ມູນຄ່າລວມທັງໝົດຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ;
- ຄວນລາຍງານ ຫຼື ເປີດເຜີຍຂໍ້ມູນການຊື້-ຂາຍຮຸ້ນບໍລິສັດ ຂອງສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ ຫົວໜ້າກວດກາພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນ 72 ຊົ່ວໂມງ;
- ຄວນເປີດເຜີຍຄ່າບໍລິການອື່ນຂອງບໍລິສັດກວດສອບ ທີ່ບໍ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ (ຖ້າມີ ຫຼື ບໍ່ມີກໍຕາມ);
- ສະພາບໍລິຫານ ຄວນປະກອບມີສະພາບໍລິຫານເພດຍິງຢ່າງໜ້ອຍ 1 ທ່ານ;
- ປະທານສະມາຊິກສະພາບໍລິຫານ ຄວນແມ່ນສະມາຊິກອິດສະຫຼະ. ກໍລະນີປະທານສະພາບໍລິຫານບໍ່ແມ່ນສະມາຊິກອິດສະຫຼະ ຄວນພິຈາລະນາຄັດເລືອກ ແລະ ແຕ່ງຕັ້ງຫົວໜ້າສະມາຊິກອິດສະຫຼະ;
- ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ ຄວນແມ່ນສະມາຊິກອິດສະຫຼະ;
- ສະພາບໍລິຫານຄວນປະເມີນຜົນການເຄື່ອນໄຫວວຽກງານຂອງ ປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານແຕ່ລະປີ;
- ສະພາບໍລິຫານຄວນເປີດເຜີຍມາດຖານ, ເງື່ອນໄຂກ່ຽວກັບການປະເມີນຜົນການເຄື່ອນໄຫວວຽກງານຂອງ ປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດ ປະຈຳປີ;
- ຄວນສ້າງ ແລະ ເປີດເຜີຍລະບຽບພາຍໃນກ່ຽວກັບການກຳນົດຄ່າຕອບແທນຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານ ໃຫ້ມວນຊົນຊາບ ຜ່ານທາງເວັບໄຊຂອງບໍລິສັດ;
- ຄວນເປີດເຜີຍແຜນສືບທອດພະນັກງານສຳລັບຕຳແໜ່ງຂອງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ.

ຜູ້ອຳນວຍການໃຫຍ່ ຕລຊລ

ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ Lao Securities Exchange Co.,Ltd

ສຸວະສະຫວາດ ທິລະກຸນ